ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 2084 /ກງ
ນະຄອນຫຼວງວຽງຈັນ, ວັນທີ 30 ເມສາ 2021

# ແຈ້ງການ

**ຮຽນ:** ບັນດາທ່ານ ລັດຖະມົນຕີກະຊວງ ແລະ ຫົວໜ້າອົງການທຽບເທົ່າ ທີ່ນັບຖື.
ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງ ໃນຂອບເຂດທົ່ວປະເທດ ທີ່ນັບຖື.

**ເລື່ອງ:** ມາດຕະການຄຸ້ມຄອງ ແລະ ປະຕິບັດລາຍຈ່າຍງົບປະມານແຫ່ງລັດ ໄລຍະການແຜ່ລະບາດຂອງພະຍາດ Covid-19 ປີ 2021.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 08/05/2017 ວ່າດ້ວຍການ ຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21/04/2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດ ໂຄວິດ-19;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 406/ຫສນຍ, ລົງວັນທີ 26/4/2021.

ເພື່ອຈັດຕັ້ງຜັນຂະຫຍາຍ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21/04/2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດ COVID-19 ໃນການຄຸ້ມຄອງງົບປະມານ ໂດຍສະເພາະແມ່ນມາດຕະການດ້ານລາຍຈ່າຍງົບປະມານ ໄລຍະການແຜ່ລະບາດຂອງພະຍາດ Covid-19 ປີ 2021 ໃນທົ່ວໂລກ ແລະ ພາຍໃນປະເທດເຮົາ ທີ່ມີການແຜ່ລະບາດເປັນວົງກ້ວາງ ແລະ ບໍ່ທັນມີທ່າອ່ຽງຫຼຸດຜ່ອນລົງ ຊຶ່ງສ້າງຜົນກະທົບຢ່າງໜັກໜ່ວງຕໍ່ ເສດຖະກິດ-ສັງຄົມ, ການດຳລົງຊີວິດ ແລະ ລາຍຮັບງົບປະມານປະຈຳປີ ຢ່າງຫຼີກລ່ຽງບໍ່ໄດ້.

**ລັດຖະມົນຕີ ກະຊວງການເງິນ ອອກແຈ້ງການ, ດັ່ງນີ້:**

1. **ມາດຕະການດ້ານລາຍຈ່າຍບໍລິຫານປົກກະຕິ**

1) ໃຫ້ຂະແໜງງົບປະມານແຫ່ງລັດ ແລະ ຄັງເງິນແຫ່ງຊາດ ກວດກາການ ອະນຸມັດ ແລະ ການເບີກຈ່າຍງົບປະມານຢ່າງລະອຽດ ແລະ ຮັດກຸມ ໂດຍເລັ່ງໃສ່ສະເພາະລາຍຈ່າຍທີ່ຈຳເປັນ, ວຽກງານຮີບດ່ວນ ໂດຍສຸມໃສ່ການຕອບໂຕ້ ແລະ ແກ້ໄຂການລະບາດຂອງພະຍາດ Covid-19 ເປັນບຸລິມະສິດ ໄປຄຽງຄູ່ກັບການປະຕິບັດລາຍຈ່າຍເງິນເດືອນ, ເງິນນະໂຍບາຍ ຂອງພະນັກງານລັດຖະກອນ, ທະຫານ, ຕຳຫຼວດ ແລະ ພະນັກງານບຳນານຢ່າງເປັນປົກກະຕິ, ທັນເວລາ ແລະ ຊຳລະລາຍຈ່າຍໜີ້ສິນຕ່າງປະເທດ ຕາມສັນຍາ, ພ້ອມທັງຕອບສະໜອງລາຍຈ່າຍເງິນບໍລິຫານທີ່ຈຳເປັນໃນການເຄື່ອນໄຫວ ຂອງກົງຈັກພັກ ແລະ ລັດຖະບານໃຫ້ສາມາດເຄື່ອນໄຫວໄດ້ ເປັນຕົ້ນ: ຄ່າໄຟຟ້າ, ນ້ຳປະປາ, ໂທລະສັບ, ນ້ຳມັນບໍລິຫານ, ນ້ຳມັນຕິດພັນບຸກຄົນ ແລະ ລາຍຈ່າຍຕ່າງໆ ທີ່ຈຳເປັນໃຫ້ໄດ້ໂດຍພື້ນຖານ;

2) ບໍ່ອະນຸຍາດໃຫ້ບັນດາຫົວໜ່ວຍງົບປະມານ ສູນກາງ ແລະ ທ້ອງຖິ່ນ ສະເໜີອະນຸມັດບາງຮ່ວງລາຍຈ່າຍ ເຊັ່ນ: ລາຍຈ່າຍທີ່ຕິດພັນກັບການໄປວຽກທາງການພາຍໃນ ແລະ ຕ່າງປະເທດ, ການຈັດກອງປະຊຸມ-ສຳມະນາຕ່າງໆ, ລາຍຈ່າຍຮັບແຂກຕ່າງປະເທດ, ລາຍຈ່າຍຊື້ຊັບສິນບັດຄົງທີ່, ສ້ອມແປງ ແລະ ລາຍຈ່າຍອື່ນໆ ທີ່ບໍ່ຈຳເປັນໃນໄລຍະນີ້, ກໍລະນີຂະແໜງງົບປະມານໄດ້ອະນຸມັດແລ້ວ ບໍ່ໃຫ້ຫົວໜ່ວຍງົບປະມານປະກອບໃບຖອນເງິນ, ສ່ວນເອກະສານທີ່ຫົວໜ່ວຍງົບປະມານໄດ້ປະກອບໃບຖອນເງິນ ຫາ ຄັງເງິນແຫ່ງຊາດແລ້ວ ແມ່ນໃຫ້ ຄັງເງິນແຫ່ງຊາດໂຈະການເບີກຈ່າຍ;

3) ໃນສະພາບທີ່ມີຄວາມຕ້ອງການງົບປະມານສຸມໃສ່ຕອບໂຕ້, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດ Covid-19 ໃຫ້ຫົວໜ່ວຍງົບປະມານ ສູນກາງ ແລະ ທ້ອງຖິ່ນ ໃຊ້ມາດຕະການຮັດສາຍແອວ ແລະ ຫຼຸດຜ່ອນງົບປະມານຂອງຕົນເອງລົງ ເພື່ອຫັນໄປສຸມໃສ່ຂະແໜງການທີ່ມີຄວາມຈຳເປັນໃນການນຳໃຊ້ງົບປະມານ ໂດຍສະເພາະແມ່ນຂະແໜງ ສາທາລະນະສຸກ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຄະນະສະເພາະກິດ Covid-19 ແລະ ຄະນະສະເພາະກິດຕ່າງໆ ທີ່ກ່ຽວຂ້ອງ;

4) ຫົວໜ່ວຍງົບປະມານ ສູນກາງ ແລະ ທ້ອງຖິ່ນ ທີ່ມີລາຍຮັບວິຊາການ ແລະ ກອງທຶນ ມອບລາຍຮັບທີ່ຈັດເກັບໄດ້ເຂົ້າງົບປະມານໃຫ້ຄົບຖ້ວນ, ຈັດລຽງບຸລິມະສິດລາຍຈ່າຍຄືນໃໝ່ ໂດຍໃຫ້ມີການປະຢັດມັດທະຍັດ ແລະ ມີສ່ວນເຫຼືອເພື່ອຊ່ວຍໜູນງົບປະມານລວມ.

## 2. ມາດຕະການດ້ານລາຍຈ່າຍເງິນລົງທຶນພາຍໃນຂອງລັດ

1) ແຜນລາຍຈ່າຍເງິນລົງທຶນພາຍໃນຂອງລັດ ບ້ວງເລື່ອນຈ່າຍຈາກປີ 2020 ຈຳນວນ 700 ຕື້ກີບ ໃຫ້ສືບຕໍ່ປະຕິບັດການອະນຸມັດ ແລະ ເບີກຈ່າຍ ໃຫ້ສຳເລັດ ໃນ 6 ເດືອນຕົ້ນປີ 2021, ແຕ່ໃຫ້ໂຈະຊົ່ວຄາວເງິນສົ່ງເສີມວິຊາການ ທີ່ເປັນການລົງຊຸກຍູ້, ຕິດຕາມ ຂະແໜງການ ແລະ ທ້ອງຖິ່ນ;

2) ແຜນລາຍຈ່າຍເງິນລົງທຶນພາຍໃນຂອງລັດ ບ້ວງແຜນປົກກະຕິ ປີ 2021 ຈຳນວນ 1.300 ຕື້ກີບ ໃຫ້ເລີ່ມປະຕິບັດຕາມແຜນ ພາຍຫຼັງ ກະຊວງແຜນການ ແລະ ການລົງທຶນ ແຈ້ງແຜນໂຄງການລົງທຶນລະອຽດ ບົນພື້ນຖານຄວາມອາດສາມາດຕົວຈິງຂອງງົບປະມານ;

3. ໃຫ້ຂະແໜງການສູນກາງ ແລະ ທ້ອງຖິ່ນ ເປັນເຈົ້າການກວດຄືນລາຍຈ່າຍທີ່ເຫັນວ່າສາມາດເຈລະຈາເລື່ອນ ຫຼື ໂຈະການໃຊ້ຈ່າຍກ່ອນໄດ້ ນຳພາກສ່ວນກ່ຽວຂ້ອງ ເຊັ່ນ: ເງິນປະກອບສ່ວນທາງລົດໄຟ, ເງິນປະກອບສ່ວນບຳລຸງອົງການຈັດຕັ້ງສາກົນ ແລະ ອື່ນໆ ແລ້ວແຈ້ງໃຫ້ ກະຊວງການເງິນ ໂດຍໄວ;

4. ໃນກໍລະນີ ທີ່ສະພາບການແຜ່ລະບາດ ຂອງພະຍາດ ໂຄວິດ-19 ຍັງບໍ່ສາມາດຄວບຄຸມໄດ້ໃນໄລຍະອັນໃກ້ນີ້ ແລະ ລັດຖະບານ ຍັງສືບຕໍ່ (Lock down) ກະຊວງການເງິນ ຈະໄດ້ຄົ້ນຄ້ວາ ແລະ ສະເໜີມາດຕະການຕໍ່ລັດຖະບານ ໃນການຫຼຸດ, ໂຈະ ຫຼື ສືບຕໍ່ເລື່ອນລາຍຈ່າຍ ຂອງຂະແໜງການສູນກາງ ແລະ ທ້ອງຖິ່ນ ລົງຕາມສະພາບການຈັດເກັບລາຍຮັບທີ່ບໍ່ສາມາດບັນລຸຕາມຄາດໝາຍທີ່ສະພາແຫ່ງຊາດຮັບຮອງ;

5. ໃຫ້ບັນດາ ກະຊວງ, ອົງການສູນກາງ, ນະຄອນຫຼວງ ແລະ ບັນດາແຂວງ ຊີ້ນຳຂະແໜງການກ່ຽວຂ້ອງ ໃນຄວາມຮັບຜິດຊອບຂອງຕົນ ເພື່ອຈັດຕັ້ງປະຕິບັດໃຫ້ເປັນເອກະພາບ ແລະ ມີປະສິດທິຜົນສູງ;

6. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກ່ວາຈະມີແຈ້ງການປ່ຽນແທນ.

**ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.**

**ລັດຖະມົນຕີ ກະຊວງການເງິນ**

**ບຸນໂຈມ ອຸບົນປະເສີດ**